ເພື່ອຮັບປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການໃຫ້ແກ່ຊາວ
ກະສິກອນໃນເຂດບ້ານເປົ້າໝາຍຂອງໂຄງການກະສິກຳເພື່ອໂພຊະນາການ




ອອກແບບ ແລະ ຈັດໜ້າໂດຍ:
ສະຖາບັນຄົ້ນຄ້ວາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບັດ
ສູນຄົ້ນຄວ້າການປະມົງ
ບ້ານຈັນສະຫວ່າງ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ສ ປປ ລາວ.
ໂທ: +856 20 98976875
E-mail : oulaytham02@hotmail.com


10

# ສະຖາບັນຄົ້ນຄວ້າການສະກຳ, ປ່າໄມ້ ແລະ ພັດທະນາຊົນະບົດ

# ສູນຄົ້ນຄວ້າການປະມົງ

# ໂຄງການກະສິກຳເພື່ອໂພຊະນາການ ໄລຍະ 2



# ການສ້າງລະບຽບຄຸ້ມຄອງຊັບພະຍາກອນສັດນ້ຳຢູ່ເຂດວັງສະຫງວນ

ພຶດສະພາ 2025

# ເອກະສານອ້າງອີງ

ກົມລ້ຽງສັດ ແລະ ການປະມົງ. 2017, ຄູ່ມືການສ້າງລະບຽບຊັບພະຍາກອນສັດນ້ຳ ແບບມີສ່ວນຮ່ວມ

## ຂັ້ນຕອນສຳຄັນໃນການສ້າງລະບຽບຄຸ້ມຄອງຊັບພະຍາກອນສັດນ້ຳແບບມີສ່ວນຮ່ວມ






## ຂໍ້ແນະນຳ

ປຶ້ມຄູ່ມືນີ້ແມ່ນເຈດຕະນາເຮັດໃຫ້ການນຳໃຊ້ເຄື່ອງມືງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເໜີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງການນຳໃຊ້ປຶ້ມຄູ່ມືກ່ຽວກັບການສ້າງລະບຽບຄຸ້ມຄອງວັງສະຫງວນ ຂອງຊຸມຊົນ ໃຫ້ມີຄວາມຍືນຍົງຢູ່ໃນບ້ານເປົ້າໝາຍ ໂຄງການ ກະສິກຳ ເພື່ອໂພຊະນາການ ໄລຍະ 2.

ປຶ້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາ ແລະ ປັບປຸງໃຫ້ແທດເໝາະໃນການຈັດຕັ້ງປະຕິບັດຂອງ ໂຄງການ ກະສິກຳເພື່ອ ໂພຊະນາການ ໄລຍະ 2. ໂດຍມີການຮ່ວມມືກັບນັກວິຊາການສະເພາະດ້ານ ແລະ ພະນັກງານປະສານຂອງໂຄງການ NAFRI ເພື່ອພັດທະນາມາເປັນເຄື່ອງມືໃຫ້ແກ່ພະນັກງານຂັ້ນແຂວງ, ເມືອງ ສາມາດຖ່າຍທອດໄປເຖິງຕາມຄວາມຕ້ອງການຂອງຊາວກະສິກອນໃນພື້ນທີ່ເປົ້າໝາຍໂຄງການ.


**ຂຽນ ແລະ ຮຽບຮຽງໂດຍ:**

ອຸໄລທຳ ລາຊະສິມມາ

**ອອກແບບ ແລະ ຈັດໜ້າໂດຍ:**

ອຸໄລທຳ ລາຊະສິມມາ, ອານົງ ວິໄລວັນ

**ຜູ້ກວດແກ້:**

ສຸລິວົງ ໄຊຍະວົງ, ບຸນສົງ ວົງວິຈິດ, ວົງວິໄລ ວົງຄຳຊາວ

## ສາລະບານ


| | ໜ້າ |
|---|---|
| ຂໍ້ແນະນຳ | 3 |
| ສາລະບານ | 4 |
| ຄຳນຳ | 5 |
| ຂັ້ນຕອນການສຳຄັນໃນການສ້າງລະບຽບຄຸ້ມຄອງວັງສະຫງວນແບບມີສ່ວນຮ່ວມ | 6 |
| ຂັ້ນຕອນທີ 1: ການສ້າງຄວາມເຫັນດີ ແລະ ເຫັນພ້ອມຮ່ວມກັນ | 6 |
| ຂັ້ນຕອນທີ 2: ການຮ່າງກົດລະບຽບ | 10 |
| ຂັ້ນຕອນທີ 3: ການປັບປຸງລະບຽບທີ່ໄດ້ຮ່າງມາໂດຍບ້ານ | 16 |
| ຂັ້ນຕອນທີ 4: ການປັບປຸງລະບຽບທີ່ໄດ້ຮ່າງອອກມາໂດຍບ້ານ ແລະ ເມືອງ | 18 |
| ຂັ້ນຕອນທີ 5: ທາງເມືອງຮັບຮອງເອົາລະບຽບການຄຸ້ມຄອງຊັບພະຍາກອນສັດນ້ຳ | 19 |
| ຂັ້ນຕອນທີ 6: ປະກາດນຳໃຊ້ລະບຽບຂອງບ້ານຢ່າງເປັນທາງການກ່ຽວກັບ " ການຄຸ້ມຄອງຊັບພະນາກອນສັດນ້ຳ" | 23 |
| ເອກະສານອ້າງອີງ | |




***ການປະຕິບັດ:***

- ເມືອລະບຽບຂອງບ້ານໄດ້ຮັບຮອງຢ່າງເປັນທາງການແລ້ວ ຂັ້ນຕໍ່ໄປແມ່ນຈະປະກາດໃຫ້ຊຸມຊົນຮັບຮູ້.
- ຕິດຕັ້ງຫຼັກຂອບເຂດ ປ້າຍກົດລະບຽບວັງສະຫງວນ.
- ແຈກຢາຍສຳເນົາລະບຽບຂອງບ້ານ ໃຫ້ອົງການຈັດຕັ້ງພາຍໃນ ແລະ ບ້ານອ້ອມຂ້າງ.
- ຕົ້ນສະບັບຂອງບ້ານແມ່ນຈະໄດ້ແຈກຢາຍໄປຫາພາກສ່ວນກ່ຽວຂ້ອງ ເຊັ່ນ: ອຳນາດການປົກຄອງບ້ານ, ຫ້ອງການກະສິກຳ-ປ່າໄມ້ເມືອງ, ຫ້ອງການປົກຄອງເມືອງ ແລະ ພະແນກກະສິກຳ ແລປ່າໄມ້ແຂວງ.



ການລົງເກັບກຳຂໍ້ມູນດ້ານຊີວະນາໆພັນສັດນ້ຳຂອງບ້ານເປົ້າໝາຍໂຄງການ



ສະພາບພື້ນທີເຂດແມ່ນ້ຳຈະສ້າງວັງສະຫງວນບ້ານລະເສນ ເມືອງສະໜ້ອຍ



ສະພາບພື້ນທີເຂດອ່າງເກັບນ້ຳຈະສ້າງວັງສະຫງວນບ້ານໃໝ່ຖາວອນ ເມືອງຊານໄຊ



# ຄຳນຳ

ຊີ້ນປາ ແລະ ສັດນ້ຳ ເປັນແຫຼ່ງທາດຊີ້ນທີ່ສຳຄັນ ຊາວກະສິກອນ ເອົາມາບໍລິໂພກເປັນປະຈຳວັນ, ການຫາປາໃນແຫຼ່ງນ້ຳທຳມະຊາດໃນປະຈຸບັນແມ່ນຫາໄດ້ໜ້ອຍ. ການຄຸ້ມຄອງວັງສະຫງວນແບບມີສ່ວນຮ່ວມ ຂອງຊຸມຊົນ ແມ່ນທາງເລືອກໜຶ່ງທີ່ສາມາດປະຕິບັດໄດ້ຮັບຜົນດີ ແລະ ມີການປະຕິບັດຢ່າງແຜ່ຫຼາຍ ນອກນັ້ນຍັງເປັນການຮັບປະກັນດ້ານສະບຽງອາຫານ ແລະ ສ້າງລາຍຮັບໃຫ້ແກ່ຊຸມຊົນ.

ການຄຸ້ມຄອງວັງສະງວນແບບມີສ່ວນຮ່ວມ ຂອງຊຸມຊົນ ແມ່ນຮູບແບບໜຶ່ງຂອງ ການຄຸ້ມຄອງປະມົງແບບມີສ່ວນຮ່ວມ ແລະ ສາມາດນຳໃຊ້ໄດ້ດີໃນເຂດຊົນນະບົດ, ຮູບແບບດັ່ງກ່າວສາມາດຍົກຜົນຜະລິດຂອງ ສັດນ້ຳໃນແຫຼ່ງນ້ຳທຳມະຊາດ ໃຫ້ເພີ່ມຂຶ້ນ ແລະ ມີຄວາມອຸດົມສົມບູນທາງດ້ານຊີວະນາໆຂອງສັດນ້ຳອີກ.

ປື້ມຄູ່ມືສະບັບນີ້ ໄດ້ພັດທະນາຂຶ້ນ ເພື່ອຕອບສະໜອງດ້ານວິຊາການໃຫ້ປະຊາຊົນ ໃນຊຸມຊົນ ເພື່ອສາມາດເອົານຳໃຊ້ໃນວຽກງານຕົວຈິງໃນເຂດພື້ນທີຊົນນະບົດ.

ຜູ້ຂຽນໄດ້ສັງລວມ ແລະ ຄັດຈ້ອນເອົາຂໍ້ມູນດ້ານເຕັກນິກວິຊາການຈາກສູນຄົ້ນຄວ້າການປະມົງ, ສະຖາບັນຄົ້ນຄວ້າກະສິກຳ,ປ່າໄມ້ ແລະ ພັດທະນາຊົນນະບົດ, ຕຳລາຕ່າງໆຈາກບັນດາກົມທີ່ກ່ຽວຂ້ອງ ແລະ ປະສົບການ ຕົວຈິງຈາກພາກສະໜາມທີ່ມີຄວາມສຳເລັດ.

## ຂັ້ນຕອນການສຳຄັນໃນການສ້າງລະບຽບຄຸ້ມຄອງຊັບພະຍາກອນສັດນ້ຳ ແບບມີສ່ວນຮ່ວມ

### ຂັ້ນຕອນທີ 1: ການສ້າງຄວາມເຫັນດີ ແລະ ເຫັນພ້ອມຮ່ວມກັນ

ຂັ້ນຕອນການສ້າງຄວາມເຫັນດີ ແລະ ເຫັນພ້ອມຮ່ວມກັນພາຍໃນຊຸມຊົນດ້ວຍກັນ ເຊິ່ງຖືວ່າເປັນໝາກຫົວໃຈສຳຄັນຂອງວຽກງານສ້າງລະບຽບການຄຸ້ມຄອງຊັບພະຍາກອນສັດນ້ຳໃຫ້ປະສິບຜົນສຳເລັດ ການຈັດກອງປະຊຸມຂັ້ນບ້ານແມ່ນຈະຊ່ວຍສ້າງຄວາມເຫັນດີ ແລະ ເປັນເອກະພາບພາຍໃນຊຸມຊົນ ໂດຍຜ່ານຂະບວນການປຶກສາຫາລືການສົນທະນາ. ການກຳນົດບັນຫາ ແລະ ຊອກຫາວິທີການແກ້ໄຂໄດ້ດ້ວຍການຄຸ້ມຄອງຮ່ວມກັນ ເພື່ອໃຫ້ໄດ້ຮັບຄວາມເຫັນດີ ແລະ ເຫັນພ້ອມກັນຈາກຊຸມຊົນ ສິ່ງສຳຄັນທີ່ສຸດຄືຕ້ອງໃຫ້ຊຸມຊົນໄດ້ມີສ່ວນຮ່ວມໃນວຽກງານດັ່ງກ່າວ. ໃຫ້ຊຸມຊົນເກີດຄວາມຮູ້ສຶກວ່າແນວຄວາມຄິດຂອງເຂົາເຈົ້າມີສ່ວນຮ່ວມເຂົ້າໃນຂະບວນການສ້າງລະບຽບຂອງບ້ານກໍ່ຄືສ້າງລະບຽບການຄຸ້ມຄອງຊັບພະຍາກອນສັດນ້ຳ.





### ຂັ້ນຕອນທີ 6: ປະກາດນຳໃຊ້ລະບຽບຂອງບ້ານຢ່າງເປັນທາງການກ່ຽວກັບ " ການຄຸ້ມຄອງຊັບພະຍາກອນສັດນ້ຳ"

ການປະກາດໃຫ້ຊຸມຊົນຮັບຮູ້ການນຳໃຊ້ລະບຽບການຄຸ້ມຄອງຊັບພະຍາກອນສັດນ້ຳຂອງບ້ານ ແມ່ນຖືວ່າເປັນຂັ້ນຕອນທີ່ສຳ ຄັນເພື່ອໃຫ້ແນ່ໃຈວ່າລະບຽບຂອງບ້ານຈະໄດ້ຮັບການປະຕິບັດຢ່າງແທ້ຈິງ ແລະ ຫຼີກລ້ຽງຄວາມຂັດແຍ່ງທີ່ອາດຈະເກີດຂັ້ນ ຍ້ອນບໍ່ໄດ້ຂໍ້ມູນຂ່າວສານ). ການປະກາດນຳໃຊ້ລະບຽບຂອງບ້ານໃຫ້ມະຫາ ຊົນຮັບຮູ້ແມ່ນຈະເຮັດໃຫ້ບ້ານດັ່ງກ່າວເກີດຄວາມພາກພູມໃຈໃນຄວາມພະຍາຍາມຂອງເຂົາເຈົ້າທີ່ມີຄວາມຮັບຜິດຊອບສູງໃນການນຳໃຊ້ຊັບພະຍາກອນສັດນ້ຳ ແລະ ການປົກປັກຮັກສາຊີວະນາໆພັນວຽກງານດັ່ງກ່າວຍັງເປີດໂອກາດໃຫ້ຊຸມຊົນໄດ້ມີການແລກປ່ຽນຂໍ້ມູນບ້ານກັບບ້ານເພື່ອຫາແນວທາງປະຕິບັດການຄຸ້ມຄອງຊັບພະຍາກອນສັດນ້ຳທີ່ມີໃຫ້ໄດ້ຮັບຜົນດີທີ່ສຸດ ແລະ ທັງເປັນການສົ່ງເສີມໃຫ້ບ້ານອື່ນໆລິເລີ່ມຕ້ອງການຢາກສ້າງລະບຽບຄຸ້ມຄອງ ໃນເຂດບໍລິເວດແຫຼ່ງນ້ຳຂອງເຂົາເຈົ້າ. ພິທີປະກາດນຳໃຊ້ລະບຽບຂອງບ້ານຄວນມີການເຜີຍແຜ່ຄືນເນື້ອໃນຂອງລະບຽບດັ່ງກ່າວພ້ອມທັງການຈັດຕັ້ງພາຍໃນບ້ານ.ບ້ານອ້ອມຂ້າງ ແລະ ພາກສ່ວນກ່ຽວຂ້ອງຂັ້ນເມືອງ,ມີການອອກຂ່າວທາງໂທລະພາບວິທະຍຸ ແລະ ໜັງສືພິມຕ່າງໆອີກດ້ວຍ.

***ສິ່ງທີ່ສຳຄັນ:***

- ການເຊັນຮັບຮອງເອົາລະບຽບຂອງບ້ານ ຖືວ່າເປັນຂັ້ນຕອນທີ່ສຳຄັນທີ່ສຸດ, ເຊິ່ງໃນແຕ່ລະເມືອງຕ້ອງມີຂັ້ນຕອນການດຳເນີນການທີ່ແຕກຕ່າງກັນເຊັ່ນ: ບາງເມືອງແມ່ນຕ້ອງໃຫ້ມີລາຍເຊັນຈາກຄະນະພັກບ້ານ ແລະ ອຳນາດການປົກຄອງບ້ານ, ບາງເມືອງບໍ່ຈຳເປັນໃຫ້ຫ້ອງການກະສິກຳ-ປ່າໄມ້ ເມືອງ ເຊັນຮັບຮອງແຕ່ສາມາດສົ່ງໂດຍກົງໃຫ້ທ່ານເຈົ້າເມືອງເຊັນຮັບຮອງເອົາເລີຍ ເຊິ່ງການປະຕິບັດຂັ້ນຕອນຕ່າງໆ ແມ່ນຈະໄດ້ອີງໃສ່ກັບສະພາບຕົວຈິງຂອງແຕ່ລະພື້ນທີ່.





***ການປະຕິບັດ:***

ຈັດກອງປະຊຸມບ້ານເພື່ອໃຫ້ຊາວບ້ານໄດ້ປຶກສາຫາລື ຫຼື ສົນທະນາກ່ຽວກັບຄວາມສຳຄັນຂອງວັງສະຫງວນ, ການນຳໃຊ້ຊີວະນາໆພັນສັດນ້ຳ ແລະ ການຄຸ້ມຄອງຊັບພະຍາກອນສັດນ້ຳແບບຍືນຍົງ. ຄັດເລືອກພື້ນທີແຫຼ່ງນ້ຳທີ່ຈະສ້າງວັງສະຫງວນໄວ້ໂດຍນຳໃຊ້ແຜນທີແຫຼ່ງນ້ຳ, ກຳນົດເອົາແຫຼ່ງນ້ຳທີສຳຄັນ ແລະ ກຳນົດຂອບເຂດຊາຍແດນວັງສະຫງວນໄວ້ໃນລະບຽບຂອງບ້ານ.

ສຶກສາສະພາບການເພື່ອໃຫ້ເຂົ້າໃຈການນຳໃຊ້ ແລະ ຄວາມສຳຄັນຂອງປະມົງ.

ສຶກສາບັນຫາ ເພື່ອໃຫ້ສາມາດກຳນົດຜົນກະທົບທີ່ເປັນໄພຂົ່ມຂູ່ ແລະ ໂອກາດກຳນົດຈຸດປະສົງຂອງບ້ານເພື່ອເຮັດການຄຸ້ມຄອງການປະມົງແບບມີສ່ວນຮ່ວມໃນບ້ານ.



| ກິດຈະກຳ | ຜົນໄດ້ຮັບ |
|---|---|
| • ຈັດກອງປະຊຸມບ້ານ.<br>• ສຳພາດຜູ້ຫາປາຊາຍ, ຍິງ ແລະ ເດັກນ້ອຍ.<br>• ລວບລວມຂໍ້ມູນກ່ຽວກັບລະບຽບການຄຸ້ມຄອງການຫາປາ.<br>• ສ້າງແຜນທີ່ແຫຼ່ງນ້ຳເພື່ອກຳນົດແຫຼ່ງນ້ຳທີ່ສຳຄັນສຳລັບການປະມົງ.<br>• ເກັບຂໍ້ມູນເຄື່ອງມືຫາປາ ຊະນິດພັນປາ ແລະ ຂໍ້ມູນການເຄື່ອນຍ້າຍຂອງປາ. | • ເຫັນດີເຫັນພ້ອມ ແລະ ເຂົ້າໃຈຈຸດປະສົງຂອງການສ້າງລະບຽບການຄຸ້ມຄອງການປະມົງ.<br>• ເຂົ້າໃຈປັດໃຈ ແລະ ບັນຫາທີ່ສາມາດແກ້ໄຂໄດ້ດ້ວຍລະບຽບການຄຸ້ມຄອງປະມົງ.<br>• ສ້າງຂໍ້ມູນຂ່າວສານດ້ານການປະມົງເພື່ອສາມາດໃຊ້ໃນການປັບລະບຽບການຄຸ້ມຄອງການປະມົງ. |







ການປະຊຸມປຶກສາຫາລືກຳນົດພື້ນທີ່ວັງສະຫງວນຂອງບ້ານ



ການກຳນົດເຂດວັງສະຫງວນຂອງບ້ານເປົ້າໝາຍ

| ກິດຈະກຳ | ຜົນໄດ້ຮັບ |
|---|---|
| • ຮ່າງລະບຽບບ້ານມີລາຍເຊັນຢັ້ງຢືນຈາກອຳນາດການປົກຄອງບ້ານແລ້ວເຮັດໃບສະເໜີເຖິງຫ້ອງການກະສິກ-ປ່າໄມ້ເມືອງ, ຫ້ອງການກະສິກຳ-ປ່າໄມ້-ປ່າໄມ້ເຊັນຢັ້ງຢືນ ແລະ ຮັບຮອງເອົາລະບຽບແລ້ວສະເໜີຕໍ່ໄປຍັງທ່ານເຈົ້າເມືອງ.<br>• ເມື່ອທ່ານເຈົ້າເມືອງເຊັນຢັ້ງຢືນ ແລະ ຮັບຮອງເອົາລະບຽບຂອງບ້ານ ແລ້ວ ກໍ່ຈະເຮັດຂໍ້ຕົກລົງການນຳໃຊ້ລະບຽບຂອງບ້ານຢ່າງເປັນທາງການ | • ລະບຽບຂອງບ້ານຮັບຮອງໂດຍ້ອງການກະສິກຳ-ປ່າໄມ້ເມືອງ. |



***ສິ່ງທີ່ສຳຄັນ:***

- ຊາວບ້ານມີຄວາມສົນໃຈໃນການເຂົ້າຮ່ວມເຮັດການຄຸ້ມຄອງຊັບພະຍາກອນສັດນ້ຳບໍ?
- ຊາວບ້ານເຫັນຜົນປະໂຫຍດທີ່ຂະໄດຮັບຈາກການຄຸ້ມຄອງຊັບພະຍາກອນສັດນ້ຳບໍ?
- ມີການຂັດແຍ່ງເກີດຂຶ້ນໃນສະຖານທີ່ຫາປາບໍ? (ໂດຍສະເພາະຈາກຄົນພາຍນອກການນຳໃຊ້ເຄື່ອງມືຫາປາທີ່ຜິດກົດໝາຍ ແລະ ອື່ນໆ).
- ປະຈຸບັນນີ້ມີການຄຸ້ມຄອງແນວໃດ? ແລະ ຜ່ານມາເຄີຍມີລະບົບການຄຸ້ມຄອງບໍ? ແຫຼ່ງນ້ຳແບບໃດ? (ວັງນ້ຳເລິກ, ແກ້ງຕາດ, ດິນບໍລິເວນນ້ຳ, ເຂດປ່ານ້ຳຖ້ວມຕາມລະດູການ, ຫ້ວຍ ແລະ ອື່ນໆ) ແລະ ຫາປາແບບໃດ? ມີຄອບຄົວອື່ນໆ, ບ້ານອື່ນໆ ຫຼື ຊຸມຊົນເຜົ່າອື່ນໆ ສາມາດເຂົ້າໄປຫາໃນແຫຼ່ງນ້ຳຂອງບ້ານໄດ້ບໍ?
- ມີເຄື່ອງມືຫາປາປະເພດໃດທີ່ຊາວບ້ານນຳໃຊ້ເຂົ້າໃນການຫາປາໃນແຕ່ລະແຫຼ່ງນ້ຳ ແລະ ເຄື່ອງມືຫາປາດັ່ງກ່າວມີການປ່ຽນເຄື່ອງມືນຳໃຊ້ໄປຕາມລະດູການບໍ?
- ເຄື່ອງມືຫາປາແຕ່ລະຊະນິດແມ່ນສາມາດຫາ ຫຼື ຈັບປາໄດ້ຊະນິດໃດແດ່? ການຈັບ ຫຼື ຫາປາແຕ່ລະຊະນິດມີການປ່ຽນແປງໄປຕາມລະດູການບໍ?
- ເຮົາຕ້ອງເຂົ້າໃຈຜູ້ທີ່ເຄີຍນຳໃຊ້ຊັບພະຍາກອນແຫຼ່ງນ້ຳ ໂດຍສະເພາະແມ່ນປະຊາຊົນບ້ານອື່ນໆ ເພື່ອໃຫ້ເຂົາເຈົ້າ ເຂົ້າໃຈເຖິງສະພາບການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນສັດນ້ຳຮ່ວມກັນ.

## .ຂັ້ນຕອນທີ 2: ການຮ່າງກົດລະບຽບ

*ການປະຕິບັດ:*

- ອະທິບາຍຂັ້ນຕອນໃນການສ້າງລະບຽບການຄຸ້ມຄອງ ຊັບພະຍາກອນສັດນ້ຳຂອງບ້ານ.
- ກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງພາກສ່ວນ ກ່ຽວຂ້ອງໃນການປະຕິບັດວຽກງານ ການຄຸ້ມຄອງ (ເຊັ່ນ: ອຳນາດການປົກຄອງບ້ານ, ຫ້ອງການກະສິກຳປ່າໄມ້ເມືອງ ແລະ ພະແນກກະສິກຳ-ສິ່ງແວດລ້ອມແຂວງ.
- ມີການສະເໜີເນື້ອໃນຂອງລະບຽບການຄຸ້ມຄອງທີ່ໄດ້ສ້າງຂຶ້ນ ມາໃຫ້ ຊຸມຊົນຮັບຊາບຄືນ ເພື່ອຄວາມກະຈ່າງແຈ້ງນຳກັນ, ຮັບຟັງຂໍ້ສະເໜີ ຫຼື ຄຳຄິດເຫັນຕ່າງໆ ເພື່ອຈະໄດ້ນຳໄປເຮັດ ການປັບປຸງແກ້ໄຂ.

**ເນື້ອໃນລະບຽບຂອງບ້ານຕ້ອງປະກອບດ້ວຍ:**

- ຈຸດປະສົງຂອງບ້ານກ່ຽວກັບການສ້າງລະບຽບການຄຸ້ມຄອງ ຊັບພະຍາກອນສັດນ້ຳ.
- ຊັບພະຍາກອນສັດນ້ຳມີພາຍໃນບ້ານ.
- ການນຳໃຊ້ ແລະ ລະບົບການຄຸ້ມຄອງຊັບພະຍາກອນສັດນ້ຳ ພາຍໃນບ້ານ.
- ລາຍລະອຽດກ່ຽວກັບລະບຽບການຕ່າງໆ.
- ມີການລະບຸໄວ້ລະອຽດກ່ຽວກັບມາດຕະການ ການກ່າວເຕືອນ, ການປັບໄໝ ແລະ ການລົງໂທດ.
- ມີການລະບຸໜ້າທີຮັບຜິດຊອບຂອງພາກສ່ວນກ່ຽວຂ້ອງໄວ້ຢ່າງ ລະອຽດໃນລະບຽບການຄຸ້ມຄອງຊັບພະຍາກອນສັດນ້ຳ.



*ສິ່ງທີ່ສຳຄັນ:*

- ການສະແດງອອກຂອງຊຸມຊົນໃນກອງປະຊຸມ ຖືວ່າເປັນສິ່ງ ສຳຄັນໃນການສ້າງຄວາມເປັນເຈົ້າການໃນ ການຮ່າງລະບຽບ.
- ກອງປະຊຸມຈະໄດຮັບຜົນດີກໍ່ຕໍ່ເມື່ອທຸກໆໃນຊຸມຊົນ ແລະ ພາກສ່ວນອ້ອມຂ້າງເມືອງເຂົ້າຮ່ວມນຳກັນ.

## ຂັ້ນຕອນທີ 5: ທາງເມືອງຮັບຮອງເອົາລະບຽບການຄຸ້ມຄອງ ຊັບພະຍາກອນສັດນ້ຳ

*ການປະຕິບັດ:*

- ກະກຽມເອກະສານໃຫ້ອຳນາດການປົກຄອງບ້ານ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງເຊັນຢັ້ງຢືນ.
- ຮ່າງລະບຽບສະບັບທີ່ສົມບູນແລ້ວຕ້ອງມີລາຍເຊັນຢັ້ງຢືນ ແລະ ຮັບຮອງຈາກອຳນາດການປົກຄອງບ້ານ, ຫ້ອງການກະສິກຳ- ປ່າໄມ້ເມືອງ ແລະ ເຈົ້າເມືອງ.
- ກະກຽມເຮັດປ້າຍລະບຽບການຄຸ້ມຄອງ ແລະ ຕິດຕັ້ງໃນ ບ້ານພ້ອມທັງເຮັດພິທີປະກາດນຳໃຊ້ລະບຽບການຄຸ້ມຄອງຢ່າງ ເປັນທາງການ.

## ຂັ້ນຕອນທີ 4: ການປັບປຸງລະບຽບທີ່ໄດ້ຮ່າງອອກມາໂດຍບ້ານ ແລະ ເມືອງ

*ການປະຕິບັດ:*

- ເປີດກອງປະຊຸມເຜີຍແຜ່ຮ່າງລະບຽບທີ່ໄດ້ຮັບການປັບປຸງ, ຮັບຟັງຂໍ້ຄິດເຫັນຕ່າງໆ ແລະ ການຮັບຮອງເອົາ.

| ກິດຈະກຳ | ໃຜເຂົ້າຮ່ວມ | ຜົນໄດ້ຮັບ |
|---|---|---|
| • ຈັດກອງປະຊຸມຊາວບ້ານເພື່ອສະເໜີຄືນເນື້ອໃນລາຍລະອຽດຂອງຮ່າງລະບຽບ.<br>• ປັບປຸງແກ້ໄຂລະບຽບບົນພື້ນຖານຂໍ້ສະເໜີ ແລະ ຄວາມຄິດເຫັນທີ່ໄດ້ຮັບຈາກຊາວບ້ານ | • ຊາວບ້ານ<br>• ອຳນາດການປົກຄອງບ້ານ<br>• ຫ້ອງການກະສິກຳ-ປ່າໄມ້ ເມືອງ<br>• ຫ້ອງການປົກຄອງເມືອງ<br>• ຫ້ອງການທະຫານເມືອງ<br>• ຫ້ອງການຕຳຫຼວດເມືອງ<br>• ຫ້ອງການສານເມືອງ<br>• ຕາງໜ້າບ້ານທີ່ຢູ່ອ້ອມຂ້າງ<br>• ພະແນກກະສິກຳ-ປ່າໄມ້ແຂວງ | • ການຮັບຮອງເອົາລະບຽບໂດຍມີບ້ານອ້ອມຂ້າງ, ພາກສ່ວນກ່ຽວຂ້ອງຂັ້ນເມືອງເຊັ່ນ: ຫ້ອງການກະສິກຳ-ປ່າໄມ້ເມືອງ, ຫ້ອງການປົກຄອງເມືອງ, ສານ, ທະຫານ, ຕຳຫຼວດ ອື່ນໆ ໄດ້ມີການຮັບຮູ້ລະບຽບດັ່ງກ່າວຮ່ວມກັນ |



| ກິດຈະກຳ | ຜົນໄດ້ຮັບ |
|---|---|
| • ຈັດກອງປະຊຸມບ້ານເພື່ອໃຫ້ຊາວບ້ານໄດ້ສົນທະນາກ່ຽວກັບການຄຸ້ມຄອງການປະມົງ ແລະ ຮ່າງລະບຽບຂອງບ້ານ. | • ຮ່າງລະບຽບ (ສາມາດເຮັດສະເພາະບ້ານດຽວ ຫຼື ມີຫຼາຍບ້ານເຮັດຮ່ວມກັນ) ອະທິບາຍຈຸດປະສົງ, ຄວາມເປັນມາຂອງບ້ານ ແລະ ການນຳໃຊ້ຊີວະນາໆພັນທາງນ້ຳ, ຂໍ້ຫວງຫ້າມ ແລະ ຂອບເຂດຊາຍແດນ, ການຕັກເຕືອນ, ການປັບໄໝ, ມາດຕະການລົງໂທດ ແລະ ອຳນາດໃນການດຳເນີນການ. |

***ສິ່ງທີ່ສຳຄັນ:***

- ມີໃຜແດ່ເຂົ້າຮ່ວມການສ້າງລະບຽບຂອງບ້ານ? ແມ່ນໃຜທີ່ບໍ່ໄດ້ເຂົ້າຮ່ວມ? ມີຊາວປະມົງໄດ້ເຂົ້າຮ່ວມໃນການຮ່າງລະບຽບບໍ?
- ຄວນພິຈາລະນາເອົາຂໍ້ມູນຈາກແມ່ຍິງ, ຄອບຄົວທີ່ທຸກຍາກ ແລະ ຊົນເຜົ່ານ້ອຍໆເຊັ່ນດຽວກັນ.
- ຖ້າການຕົກລົງຫາກບໍ່ສາມາດກ້າວໄປຮອດການສ້າງລະບຽບການຄຸ້ມຄອງການປະມົງໄດ້ກໍ່ໃຫ້ເລື່ອນເວລາອອກໄປກ່ອນ.

## ຕົວຢ່າງ: ການຮ່າງລະບຽບຄຸ້ມຄອງວັງສະຫງວນ ບ້ານລະມອງ ເມືອງພູວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ ອັດຕະປື
ເມືອງ ພູວົງ ເລກທີ........../ນບ
ບ້ານ ລະມອງ

**ກົດລະບຽບ**

**ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນສັດນ້ຳ ຂອງບ້ານລະມອງ**

**(ວັງສະຫງວນ)**

**ອີງຕາມ:** ກົດໝາຍວ່າດ້ວຍການປະມົງ ສະບັບເລກທີ 03 / ສພຊ ລົງວັນທີ 09 ກໍລະກົດ 2009.

**I. ກົດລະບຽບ, ມາດຕາການຄຸ້ມຄອງ ແລະ ນຳໃຊ້ປວັງສະຫງວນ**

**ກ. ວ່າດ້ວຍຂໍ້ຫ້າມ.**

ຂໍ້ທີ 1. ຫ້າມເດັດຂາດບໍ່ໃຫ້ບຸກຄົນ ຫຼື ກຸ່ມຄົນໃດພາຍໃນບ້ານ ຫຼື ບ້ານອື່ນຫາປາ ແລະ ສັດນ້ຳທຸກ ຊະນິດຢູ່ໃນຂອບເຂດປຸງສະຫງວນຂອງບ້ານ ລະມອງ ຕະຫຼອດປີ ບໍ່ວ່າຈະນຳໃຊ້ເຄື່ອງມືຊະນິດໃດກໍ່ຕາມ.

ຂໍ້ທີ 2. ຫ້າມເດັດຂາດບໍ່ໃຫ້ບຸກຄົນ ຫຼື ກຸ່ມຄົນໃດພາຍໃນບ້ານ ຫຼື ບ້ານອື່ນທຳລາຍມ້າງເພປ້າຍຫວງຫ້າມ ແລະ ປ້າຍໂຄສະນາອື່ນໆ ທີ່ທາງບ້ານ ລະມອງ ມາຕິດປະກາດໄວ້ຢູ່ໃນຂອບເຂດວັງສະຫງວນຂອງບ້ານ.

ຂໍ້ທີ 3. ຫ້າມເດັດຂາດບໍ່ໃຫ້ບຸກຄົນ ຫຼື ກຸ່ມຄົນໃດພາຍໃນບ້ານ ຫຼື ບ້ານອື່ນທຳລາຍທຳມະຊາດຢູ່ໃນນຸ່ງສະຫງວນ ເຊັ່ນ: ຕັດໄມ້, ຂອນໄມ້, ກິ່ງຫີນ ແລະ ອື່ນໆ ຢູ່ໃນຂອບເຂດວັງສະຫງວນລຽບຕາມສອງແຄມຝັ່ງແຕ່ແຄມນ້ຳຂຶ້ນໄປຫາແຄມຝັ່ງ, ລວງຍາວເທົ່າກັບລວງຍາວຂອງວັງສະຫງວນ.

ຂໍ້ທີ 4. ຫ້າມເດັດຂາດບໍ່ໃຫ້ບຸກຄົນ ຫຼື ກຸ່ມຄົນ, ພາກລັດ, ເອກະຊົນ, ບໍລິສັດ ແລະ ອົງການຈັດຕັ້ງ ໃດໜຶ່ງມາດຳເນີນກິດຈະກຳ ຫຼື ກິດຈະການໃດໜຶ່ງເຊັ່ນ: ຂຸດຄົ້ນບໍ່ແຮ່, ຮ້ານກິນດື່ມ, ໂຮງງານ, ສະຖານບໍລິການ ແລະ ອື່ນໆ ໃນຂອບເຂດວັງສະຫງວນຂອງບ້ານ ລະມອງ.



| ກິດຈະກຳ | ຜົນໄດ້ຮັບ |
|---|---|
| • ຈັດກອງປະຊຸມບ້ານເພື່ອອະທິບາຍ ກ່ຽວກັບການສ້າງລະບຽບ ແລະ ມີໃຜແດ່ຄວນເຂົ້າຮ່ວມ.<br>• ສົນທະນາກ່ຽວກັບຮ່າງລະບຽບຮ່ວມກັບຊາວບ້ານ, ຊາວປະມົງແລະບ້ານທີ່ຢູ່ອ້ອມຂ້າງ.<br>• ບັນທຶກຂໍ້ມູນກ່ຽວກັບຄວາມຄິດຄວາມເຫັນຂອງກຸ່ມທີ່ແຕກຕ່າງເພື່ອເຮັດການປັບປຸງແກ້ໄຂເນື້ອໃນຂອງຮ່າງລະບຽບ. | • ຮ່າງລະບຽບ (ສາມາດເຮັດສະເພາະບ້ານດຽວ ຫຼື ມີຫຼາຍບ້ານເຮັດຮ່ວມກັນ) ອະທິບາຍຈຸດປະສົງ, ຄວາມເປັນມາຂອງບ້ານ ແລະ ການນຳໃຊ້ຊື່ວະນາງພັນທາງນ້ຳ, ຂໍ້ຫວງຫ້າມ ແລະ ຂອບເຂດຊາຍແດນ, ການຕັກເຕືອນ, ການປັບໄໝ, ມາດຕະການລົງໂທດ ແລະ ອຳນາດໃນການດຳເນີນການ. |

***ສິ່ງທີ່ສຳຄັນ:***

- ພາກສ່ວນໃດແດ່ທີ່ມີສ່ວນກ່ຽວຂ້ອງກ່ຽວກັບລະບຽບການ?
- ພາກສ່ວນໃດແດ່ບໍ່ໄດ້ມີສ່ວນກ່ຽວຂ້ອງ?
- ລະບຽບການດັ່ງກ່າວທີ່ໄດ້ສ້າງຂຶ້ນມາແລ້ວມີຄວາມຂັດແຍ່ງກັບກຸ່ມໃດແດ່? ແລະ ບ້ານໃດແດ່?

1. ບັນຊີ: ທ່ານ ຮອງນາຍບ້ານຜູ້ທີ 02 ແລະ ຜູ້ທີ 04.

2. ຄັງເງິນສົດ: ທ່ານ ຫົວໜ້າສະຫະພັນແມ່ຍິງບ້ານ.

## VIII. ພາລະບົດບາດ ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບ.

## IX. ບົດບັນຍັດສຸດທ້າຍ



ການນຳສະເໜີຂໍ້ມູນດ້ານການຄຸ້ມຄອງປະມົງແບບມີສ່ວນຮ່ວມ

## ຂັ້ນຕອນທີ 3: ການປັບປຸງລະບຽບທີ່ໄດ້ຮ່າງມາໂດຍບ້ານ

## .ຂັ້ນຕອນທີ 2: ການຮ່າງກົດລະບຽບ

***ການປະຕິບັດ:***

- ຈັດກອງປະຊຸມບ້ານໂດຍໃຫ້ອຳນາດການປົກຄອງບ້ານສະເໜີ ຜ່ານແຕ່ລະຫົວຂໍ້ຂອງລະບຽບ ແລະ ຮັບຟັງ ຂໍ້ສະເໜີແນະ ຕ່າງໆເພື່ອທົບທວນ ແລະ ປັບປຸງແກ້ໄຂ.
- ປັບປຸງຮ່າງລະບຽບບົນພື້ນຖານຂໍ້ມູນທີ່ໄດ້ຮັບການຂໍ້ສະເໜີ ຕ່າງໆຂອງຊາວບ້ານ.



ຂໍ້ທີ 5. ຫ້າມເດັດຂາດບໍ່ໃຫ້ບຸກຄົນ ຫຼື ກຸ່ມຄົນໃດພາຍໃນບ້ານ ຫຼື ບ້ານອື່ນນຳໃຊ້ເຄື່ອງມືຫາປາ ທີ່ຜິດກົດໝາຍ ເຊັ່ນ: ໝໍ້ດູດ, ໝໍ້ຊ໊ອດ, ຢາເບື່ອ, ລະເບີດ, ໜ້າກາກ, ປືນ ແລະ ອື່ນໆເພື່ອຫາປາແບບດັບສູນຢູ່ໃນຂອບເຂດການຄຸ້ມຄອງຊັບພະຍາກອນສັດນ້ຳຂອງບ້ານ ລະມອງ.

ຂໍ້ທີ 6. ຫ້າມເດັດຂາດບໍ່ໃຫ້ບຸກຄົນໃດ ຫຼື ກຸ່ມຄົນໃດພາຍໃນບ້ານ ຫຼື ບ້ານອື່ນຕັ້ນທ້ອຍຮ່ອງໃນ ຊ່ວງລະດູປາຂຶ້ນວາງໄຂ່ (ແຕ່ເດືອນ 6 - 8 ) ເຊັ່ນ: ຕ້ອນ, ຫຼີ່, ມອງ, ປ້ານຄັນຄູ ແລະ ອື່ນໆ ໃນຂອບເຂດການຄຸ້ມຄອງຊັບພະຍາກອນສັດນ້ຳຂອງບ້ານ ລະມອງ.

ຂໍ້ທີ 7. ຖ້າຫາກບຸກຄົນ ຫຼື ກຸ່ມຄົນພາຍໃນບ້ານຫຼື ບ້ານອື່ນໆ ຫາກພົບຜູ້ກະທຳຜິດຕ້ອງລາຍງານ ໃຫ້ອົງການຈັດຕັ້ງບ້ານ ຫຼື ຄະນະກຳມະການເວນຍາມໃນອັນດັ່ງກ່າວທ່ວງທັນເວລາໂລດ ຖ້າຫາກວ່າບໍ່ລາຍງານທາງອົງການຈັດຕັ້ງບ້ານສືບຜົ້ໄສ່ທັນຈະຖືກດຳເນີນຕາມລະບຽບການຂອງບ້ານ.

ຂໍ້ທີ 8. ຖ້າຫາກວ່າມີຜູ້ມາລາຍງານອົງການຈັດຕັ້ງບ້ານແລ້ວທາງອົງການຈັດຕັ້ງບ້ານຜູ້ທີ່ມີໜ້າທີ່ນອນຢູ່ໃນຄະນະຄຸ້ມຄອງວັງສະຫງວນບໍ່ປະຕິບັດຕາມໜ້າທີ່ໆຕົນໄດ້ ຮັບຜິດຊອບຈະຖືກດຳເນີນຕາມລະບຽບການຂອງບ້ານ.

**ຂ. ວ່າດ້ວຍມາດຕາການຕໍ່ຜູ້ລະເມີດ**

ຂໍ້ທີ1. ຖ້າບຸກຄົນ ຫຼື ກຸ່ມຄົນໃດຫາກລ່ວງລະເມີດຂໍ້ຫ້າມທີ່ລະບຸໄວ້ໃນຂໍ້ທີ່ 1 ຄື: (ຫ້າມເດັດ ຂາດ ບໍ່ໃຫ້ກຸ່ມຄົນ ຫຼື ກຸ່ມຄົນໃດພາຍໃນບ້ານ ຫຼື ບ້ານອື່ນ ຫາປາ ແລະ ສັດນ້ຳທຸກຊະນິດຢູ່ໃນວັງສະຫງວນ ຂອງບ້ານ ລະມອງ ຕະຫຼອດປີບໍ່ວ່າຈະນຳໃຊ້ເຄື່ອງມືຊະນິດໃດກໍ່ຕາມ) ຈະຖືກດຳເນີນຕາມມາດຕະການດັ່ງນີ້:

ຄັ້ງທີ1: ສຶກສາອົບຮົມ, ສ້າງບົດບັນທຶກຊ່ອງໜ້າອົງການຈັດຕັ້ງບ້ານ, ຢຶດອຸປະກອນ ຫາປາ, ພະຫະນະ ແລະ ປາທີ່ຫາໄດ້ພ້ອມທັງປັບໃໝ 500,000 ກີບ/ຄົນ.

ຄັ້ງທີ2: (ຜູ້ເກົ່າ) ສຶກສາອົບຮົມ, ສ້າງບົດບັນທຶກຊ່ອງໜ້າອົງການຈັດຕັ້ງບ້ານ, ຢຶດອຸປະ ກອນ ຫາປາ, ພະຫະນະ ແລະ ປາທີ່ຫາໄດ້ພ້ອມທັງປັບໃໝ 1,000,000 ກີບ/ຄົນ

ຄັ້ງທີ3: (ຜູ້ເກົ່າ) ຢຶດອຸປະກອນຫາປາ, ພະຫະນະ ແລະ ປາທີ່ຫາໄດ້ພ້ອມປະກອບສຳນວນຄະດີສົ່ງໃຫ້ເມືອງດຳເນີນຄະດີຕາມລະບຽບກົດໝາຍ.

- **ໝາຍເຫດ:** ສຳລັບເດັກອາຍຸຕ່ຳກວ່າ 18 ປີ ລົງມາ.

ຄັ້ງທີ1: ສຶກສາອົບຮົມ, ສ້າງບົດບັນທຶກຊ່ອງໜ້າອົງການຈັດຕັ້ງບ້ານ, ຄູອາຈານ, ພໍ່ແມ່ຜູ້ປົກຄອງ, ຢຶດອຸປະກອນຫາປາ, ພະຫະນະ ແລະ ປາທີ່ຫາໄດ້.

ຄັ້ງທີ2: (ຜູ້ເກົ່າ) ສຶກສາອົບຮົມ, ສ້າງບົດບັນທຶກຂໍ່ອງໜ້າອົງການຈັດຕັ້ງບ້ານ, ຄູອາຈານ, ພໍ່ແມ່ຜູ້ປົກຄອງ, ຢຶດອຸປະກອນຫາປາ ແລະ ປາທີ່ຫາໄດ້ ພ້ອມທັງປັບໃໝ 500,000 ກີບ/ຄົນ.

ຄັ້ງທີ3: (ຜູ້ເກົ່າ) ສຶກສາອົບຮົມ, ສ້າງບົດບັນທຶກຂໍ່ອງໜ້າອົງການຈັດຕັ້ງບ້ານ, ຄູອາຈານ, ພໍ່ແມ່ຜູ້ປົກຄອງ, ຢຶດອຸປະກອນຫາປາ ແລະ ປາທີ່ຫາໄດ້ ພ້ອມທັງປັບໃໝ 1,000,000 ກີບ/ຄົນ.

ຄັ້ງທີ4: (ຜູ້ເກົ່າ) ຢຶດອຸປະກອນຫາປາ ແລະ ປາທີ່ຫາໄດ້ພ້ອມທັງປະກອບສຳນວນຄະດີສົ່ງໃຫ້ເມືອງດຳເນີນຄະດີຕາມລະບຽບກົດໝາຍ.

- ສຳລັບອຸປະກອນ, ພະຫະນະ ແລະ ອື່ນໆທີ່ຢຶດມາໄດ້ແມ່ນທາງບ້ານພິຈາລະນາ ແກ້ໄຂຕາມຄວາມເໝາະສົມ.

ຄ. ວ່າດ້ວຍຂໍ້ກຳນົດ.

**ຂໍ້ທີ1:** ພາຍຫຼັງໄດ້ສ້າງຕັ້ງວັງສະຫງວນໄດ້ 3 ປີ ຂຶ້ນໄປທາງບ້ານຈະໄດ້ຈັບປາ 1 ເທື່ອຕໍ່ປີໂດຍພາຍ ໃຕ້ຄວາມເຫັນດີເປັນເອກະພາບຂອງອຳນາດການປົກຄອງ ແລະ ປະຊາຊົນທັງໝົດພາຍໃນບ້ານ, ການຈັບປາຕ້ອງປະຕິບັດຕາມວັນເວລາທີ່ເໝາະສົມ ແລະເຄື່ອງມືທີ່ກຳນົດໄວ້ (ມອງ. ແຫ 3 ຂຶ້ນໄປ) ເພື່ອລີກເວັ້ນຜົນກະທົບກະເທືອນຕ່າງໆຕໍ່ປາຢູ່ໃນວັງສະຫງວນ.

❖ **ໝາຍເຫດ:** ໃນກໍລະນີມີວຽກລວມຂອງບ້ານທີ່ມີຄວາມຈຳເປັນຕ້ອງການນຳໃຊ້ວັງສະຫງວນ ທາງຄະນະຊີ້ນຳລວມບ້ານຈະຕ້ອງໄດ້ພິຈາລະນາ ແກ້ໄຂຕາມຄວາມເໝາະສົມ.

**ຂໍ້ທີ 2.** ໃນແຕ່ລະປີ ທາງອຳນາດການປົກຄອງ ແລະ ປະຊາຊົນພາຍໃນບ້ານຕ້ອງໄດ້ພ້ອມ ພຽງກັນ ປ່ອຍປາຈຳນວນໜຶ່ງທີ່ບ້ານມີຄວາມສາມາດຊອກຫາໄດ້ 01 ເທື່ອ ໃນວັນທີ 13/7 ຂອງ ທຸກໆປີ.

## II. ນະໂຍບາຍຕໍ່ຜູ້ມີຜົນງານໃນການຄຸ້ມຄອງປຸ່ງສະຫງວນ

1. ມອບເຂົ້າຄັງລວມຂອງບ້ານ 25% ຂອງມູນຄ່າປັບໃໝ.
2. ມອບໃຫ້ຄະນະກຳມະການບ້ານທີ່ມີໜ້າມາໃກ່ເກ່ຍ 25% ຂອງມູນຄ່າປັບໃໝ.
3. ມອບໃຫ້ຄະນະເວນຍາມຂອງບ້ານທີ່ເຮັດໜ້າທີ່ໃນວັນດັ່ງກ່າວ 30% ຂອງມູນຄ່າປັບໃໝ.
4. ໃນກໍລະນີປະຊາຊົນພາຍໃນບ້ານ ຫຼື ບ້ານອື່ນມາລາຍງານຜູ້ກະທຳຜິດແລ້ວຈັບໄດ້ໄລ່ທັນ ແລະ ມີການປັບໃໝໄດ້ແມ່ນໃຫ້ຫັກເອົາ 20% ຂອງມູນຄ່າປັບໃໝ.
5. ໃນກໍລະນີປະຊາຊົນພາຍໃນບ້ານ ຫຼື ບ້ານອື່ນມາລາຍງານຜູ້ກະທຳຜິດແລ້ວຈັບໄດ້ໄລ່ທັນ ແລະ ມີການປັບໃໝໄດ້ແມ່ນໃຫ້ຫັກເອົາ 10% ຈາກຄັງລວມບ້ານ ແລະ ຈາກຄະນະກຳມະການບ້ານ 10% ລວມເປັນ 20%.



6. ຖ້າປະຊາຊົນຜູ້ໃດຜູ້ໜຶ່ງພາຍໃນບ້ານ ຫຼື ບ້ານອື່ນມີຄວາມຫ້າວຫັນຕັ້ງໃຈຕິດຕາມທາງບ້ານຈະໄດ້ພິຈາລະນາແລ້ວນຳສະເໜີຂໍໃບຍ້ອງຍໍຂັ້ນເມືອງ, ຂັ້ນແຂວງມອບໃຫ້ຜູ້ກ່ຽວ.

## III. ຄະນະຮັບຜິດຊອບການຄຸ້ມຄອງປຸ່ງສະຫງວນ.

**ກ. ຄະນະຊີ້ນຳລວມ.**

1. ທ່ານ ເລຂາພັກບ້ານ (ນາຍບ້ານ).
2. ທ່ານ ຮອງນາຍບ້ານຜູ້ທີ 01
3. ທ່ານ ຮອງນາຍບ້ານຜູ້ທີ 02
4. ທ່ານ ຮອງນາຍບ້ານຜູ້ທີ 03.
5. ທ່ານ ຮອງນາຍບ້ານຜູ້ທີ 04.

**ຂ. ຄະນະໃກ່ເກ່ຍ.**

| | | |
|---|---|---|
| 1. | ທ່ານ ຄະນະບ້ານ | 01 ທ່ານ |
| 2. | ທ່ານ ປະທານແນວໂຮມບ້ານ | 01 ທ່ານ |
| 3. | ທ່ານ ສະຫະພັນແມ່ຍິງບ້ານ | 01 ທ່ານ |
| 4. | ທ່ານ ຊາວໜຸ່ມບ້ານ | 01 ທ່ານ |
| 5. | ທ່ານ ປກຊ ບ້ານ | 01 ທ່ານ |
| 6. | ທ່ານ ປກສ ບ້ານ | 01 ທ່ານ |

**ຄ. ຄະນະກຳມະການເວນຍາມປຸ່ງສະຫງວນ.**

| | | |
|---|---|---|
| 1. | ຄະນະບ້ານ | 01 ທ່ານ |
| 2. | ປກຊ ບ້ານ | 01 ທ່ານ |
| 3. | ປກສ ບ້ານ | 01 ທ່ານ |
| 4. | ປ່າໄມ້ບ້ານ | 01 ທ່ານ |
| 5. | ຫົວໜ້າໜ່ວຍແຕ່ລະໜ່ວຍ | |

**ງ. ຮັບຜິດຊອບການເງິນ.**

1. ບັນຊີ: ທ່ານ ຮອງນາຍບ້ານຜູ້ທີ 02 ແລະ ຜູ້ທີ 04.
2. ຄັງເງິນສົດ: ທ່ານ ຫົວໜ້າສະຫະພັນແມ່ຍິງບ້ານ.